ບໍລິສັດ ສຸວັນນີ ໂຮມເຊັນເຕີ ໄດ້ຮັບ 3 ລາງວັນ ຈາກຕະຫຼາດຫຼັກຊັບລາວ

“LSX's Award 2025”

ໃນວັນທີ 19 ທັນວາ 2025 ທີ່ຜ່ານມາ, ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8 ອາຄານ ຕລຊລ- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຜູ້ຈຳໜ່າຍສິນຄ້າວັດສະດຸກໍ່ສ້າງ ແລະ ເຄື່ອງຕົກແຕ່ງເຮືອນ ໄດ້ເຂົ້າຮ່ວມພິທີ “ມອບ-ຮັບ ລາງວັນ LSX's Award 2025”.

ພິທີມອບ-ຮັບລາງວັນດັ່ງກ່າວຈຸດປະສົງແມ່ນເພື່ອສະຫຼຸບຜົນງານການຈັດຕັ້ງປະຕິບັດວຽກງານການເປີດເຜີຍຂໍ້ມູນ ແລະ ວຽກງານການປະເມີນການຈັດຕັ້ງປະຕິບັດຄຸ້ມຄອງບໍລິຫານ ແລະ ວຽກງານດ້ານອື່ນໆຂອງ ບໍລິສັດຈົດທະບຽນ ໃນ ຕລຊລ ແລະ ບໍລິສັດຫຼັກຊັບ ພ້ອມທັງຊຸກຍູ້-ສົ່ງເສີມ ແລະ ຍົກລະດັບວຽກງານດັ່ງກ່າວ ຂອງບໍລິສັດຈົດທະບຽນ ແລະ ບໍລິສັດຫຼັກຊັບໃຫ້ດີຂຶ້ນຍິ່ງຂຶ້ນກວ່າເກົ່າໃນຕໍ່ໜ້າ.

ເຊິ່ງຜ່ານການປະຕິບັດວຽກງານການເປີດເຜີຍຂໍ້ມູນ ແລະ ວຽກງານການປະເມີນການຈັດຕັ້ງປະຕິບັດຄຸ້ມ ຄອງບໍລິຫານຢ່າງຕໍ່ເນື່ອງ ເຮັດໃຫ້ບໍລິສັດສາມາດຍາດໄດ້ 3 ລາງວັນຄື: ລາງວັນ ເປີດເຜີຍຂໍ້ມູນດີເດັ່ນ (Best Disclosure Awards) , ລາງວັນປັນຜົນດີເດັ່ນ (Best Dividend Awards) ແລະ ໃບຍ້ອງຍໍ ການຄຸ້ມຄອງ ບໍລິຫານດີເດັ່ນ (CG) ປະເພດ 4 ດາວ ປະຈຳປີ 2025 ເຊິ່ງບໍລິສັດໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນທຸກວຽກ ງານທີ່ ຕລຊລ ໄດ້ຈັດຂຶ້ນ ເພື່ອເປັນການຊຸກຍູ້-ສົ່ງເສີມ ແລະ ຍົກລະດັບວຽກງານດັ່ງກ່າວ ມອບໂດຍ ທ່ານ ສຽວສະຫວາດ ທິລະກຸນ ຜູ້ອຳນວຍການໃຫຍ່ ຕລຊລ, ເຊິ່ງຕາງໜ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຂຶ້ນ ຮັບລາງວັນໂດຍ ທ່ານ ພັນໂນລາ ສຸຄະບັນດິດ ຮອງຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການໃຫຍ່ຝ່າຍການເງິນ.




LSX Awards 2025


LSX Awards is
2025


ใบຍ້ອງຍໍ
ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ


LSX Awards is
2025